ຈະຮ້ອງຂໍເອົາ
ແລະໃຊ້ແນວໃດ

# ການຊ່ວຍເຫລືອ ອາຫານ ຈຳເປັນ



Washington State
Department of Social
& Health Services

*Transforming lives*

DSHS 22-297 LA (Rev. 10/24) Laotian

# ສາລະບານ

ຄຳແນະນຳ ........................................ 1

**ການຮ້ອງຂໍເອົາອາຫານຈຳເປັນ**

ຂ້ອຍສາມາດໄດ້ຮັບອາຫານຈຳເປັນບໍ່? ........................ 2

ຂ້ອຍຈະຮ້ອງຂໍເອົາອາຫານຈຳເປັນໄດ້ຢ່າງໃດ? ............ 2

ແມ່ນຫຍັງຈະເກີດຂື້ນຫລັງຈາກທີ່ຂ້ອຍສົ່ງຄຳ
ຮ້ອງຂອງຂ້ອຂົ້າໄປແລ້ວ? ................................ 3

ຂ້ອຍຄວນຈະຖືເອົາຫຍັງມານຳເວລາມາສຳພາດ? ......... 4

ແມ່ນຫຍັງຈະເກີດຂື້ນຖ້າຫາກວ່າມີແນວໃດແນວນຶ່ງ
ປ່ຽນແປງໃນສະພາບການຂອງຄອບຄົວຂອງຂ້ອຍ? ......... 5

ຖ້າວ່າຂ້ອຍມີເງື່ອນໄຂໄດ້ຮັບ, ເມື່ອໃດຂ້ອຍ
ຈະໄດ້ຮັບການຊ່ວຍເຫລືອອາຫານຂອງຂ້ອຍ? .............. 6

ຂ້ອຍຈະໄດ້ຮັບອາຫານຈຳເປັນຂອງຂ້ອຍດົນ
ນານເທົ່າໃດ? ........................................ 7

ກົມມີນະໂຍບາຍການບໍ່ແບ່ງແຍກຊົນ
ຊັ້ນວັນນະບໍ່? ........................................ 8

**ການໃຊ້ການຊ່ວຍເຫລືອອາຫານຈຳເປັນ**

ບັດ Washington QUEST EBT
ແມ່ນຫຍັງ? ........................................ 9

ເລກ EBT PIN ແມ່ນຫຍັງ? .......................... 9

ຜູ້ຖືບັດສຳຮອງແມ່ນຫຍັງ? ............................ 10

ເມື່ອໃດຂ້ອຍຄວນຈະໂທໄປຫາຜະແນກປະ
ຊາສັມພັນຂອງ EBT? ................................ 10

ແມ່ນຫຍັງແດ່ທີ່ຂ້ອຍສາມາດເຮັດໄດ້ ແລະ
ບໍ່ສາມາດເຮັດໄດ້ນຳບັດ EBT ແລະ ການຊ່ວຍ
ເຫລືອຂອງຂ້ອຍ? .................................... 11

ຄຳຖາມ ແລະ ຄຳຕອບກ່ຽວກັບ EBT
ທີ່ຖືກຖາມກັນຢູ່ເລື້ອຍໆ................................. 13

# ຄຳແນະນຳ

ອາຫານຈຳເປັນ(ຮູ້ຈັກກັນທາງຣັດຖະບານກາງວ່າ ເປັນໂຄງການຊ່ວຍເຫລືອເຄື່ອງບໍຣິໂພກເພີ້ມເຕີມຫລື SNAP) ຊ່ວຍເຫລືອຄົນໃຫ້ຊື້ເອົາອາຫານການກິນ.

ຈຳນວນຂອງອາຫານຈຳເປັນທີ່ທ່ານສາມາດໄດ້ຮັບແມ່ນ ອີງຕາມຂະນາດຄອບຄົວຂອງທ່ານ, ຣາຍໄດ້ທີ່ໄລ່ເອົາໄດ້, ແລະຣາຍຈ່າຍປະຈຳເດືອນເຊັ່ນວ່າບ່ອນຢູ່ອາສັຍ,ຄ່ານ້ຳ ຄ່າໄຟ, ເງິນລ້ຽງລູກ,ແລະຄ່າພະຍາບານ.

ເພື່ອຈະຮູ້ຈັກຈຳນວນຂອງການຊ່ວຍເຫລືອອາ ຫານຈຳເປັນ ປະຈຳເດືອນທີ່ທ່ານສາມາດ ໄດ້ຮັບ,ໂທຫາ 1-877-501-2233.

**ເມື່ອເວລາທ່ານໄດ້ຮັບການຊ່ວຍເຫລືອອາ ຫານຈຳເປັນທ່ານຈະມີສິດໄດ້ຮັບໂຄງການ ອື່ນອີກຄືກັນ:**

- ໂຄງການຄາບອາຫານຢູ່ໂຮງຮຽນຟຣີຫລືລຸດ ຣາຄາ;
- ໂຄງການຊ່ວຍເຫລືອເຄື່ອງບໍຣິໂພກພິເສດສຳ ລັບແມ່, ເດັກທາຣົກ ແລະ ເດັກນ້ອຍຫລື WIC.

ຖ້າຫາກວ່າທ່ານຢາກໄດ້ຣາຍຣະອຽດເພີ້ມເຕີມ ຫລືມີຄຳຖາມອັນເຈາະຈົງກ່ຽວກັບສະພາບການ ຂອງທ່ານ,ໂທຫາ 1-877-501-2233 ຫລືແວ່ປ້ຽມແວບໄຊທ໌ຂອງພວກເຮົາຢູ່ທີ່: washingtonconnection.org/home/



## ຂ້ອຍສາມາດໄດ້ຮັບອາຫານຈຳເປັນບໍ່? ທ່ານອາດຈະໄດ້,ຖ້າຫາກວ່າທ່ານ:

- ອາໄສຢູ່ໃນຣັດວໍຊິງຕັນ.
- ມີຣາຍໄດ້ຕ່ຳກວ່າ 200% ຂອງຣະດັບຄວາມທຸກຍາກຂອງຣັດຖະບານກາງ.
- ສອດຄ່ອງນຳກົດກຳນົດສັນຊາດ ຫລື ສະພາບຄົນຕ່າງດ້າວ. ຖ້າຣາກວ່າທ່ານໄດ້ຮັບອາຫານຈຳເປັນ,ທ່ານຈະບໍ່ຖືກຖືວ່າເປັນພາລະຂອງສາທາຣະນະ.

## ແມ່ນໃຜແດ່ບໍ່ສາມາດໄດ້ຮັບອາຫານຈຳເປັນ?

- ນັກໂທດຫນີກົດຫມາຍ.
- ຄົນເຂົ້າເມືອງບໍ່ມີເອກສານ.

ມັນອາດຈະມີກົດກຳນົດແນວອື່ນອີງຕາມສະພາບການຂອງຄອບຄົວຂອງທ່ານ.

## ຂ້ອຍຈະຮ້ອງຂໍເອົາອາຫານຈຳເປັນໄດ້ຢ່າງໃດ?

**ມັນມີຢູ່ສີ່ຫົນທາງທີ່ຈະຮ້ອງຂໍເອົາອາຫານຈຳເປັນ:**

- ອອນລາຍນ໌ທີ່ washingtonconnection.org.
- ໂດຍທາງໂທຣະສັບ,ໂດຍບໍ່ຕ້ອງຍື່ນຄຳຮ້ອງ,ໂດຍການໂທຫາເລກ 1-877-501-2233.
- ໂດຍຕົນເອງຢູ່ຕາມຫ້ອງການຊຸມນຸມຊົນທ້ອງຖິ່ນຂອງກົມ DSHS. ຊອກຫາຫ້ອງການໃກ້ບ້ານທ່ານຢູ່ທີ່ dshs.wa.gov/office-locations.
- ໂດຍທາງໄປສະນີ:
  DSHS Customer Service Center
  P.O. Box 11699
  Tacoma, WA 98411-6699

ເພື່ອຣາຍຣະອຽດເພີ້ມເຕີມ, ໂທຫາ 877-501-2233.

ສົ່ງໃບຄຳຮ້ອງຂໍຂອງທ່ານໂດຍໄວເທົ່າທີ່ທ່ານສາມາດຣັດໄດ້. ຖ້າຫາກວ່າທ່ານມີສິດໄດ້ຮັບ,ການຊ່ວຍເຫລືອຂອງທ່ານຈະເລີ້ມຕົ້ນຈາກວັນທີທີ່ໄດ້ຮັບໃບຄຳຮ້ອງຂອງທ່ານ.ທ່ານສາມາດຍື່ນຄຳຮ້ອງທາງອອນລາຍນ໌ໄດ້ 24/7 ທີ່ washingtonconnection.org ແລະຕິດຕາມມາເພື່ອຈະທຳການສຳພາດໂດຍທາງໂທຣະສັບໄດ້ທີ່ 877-501-2233. ຫລືຖ້າຫາກວ່າທ່ານໂທມາ 8 ໂມງເຊົ້າ- 2 ໂມງແລງ,ວັນຈັນ-ວັນສຸກບໍ່ຕ້ອງໄດ້ປະກອບໃບຄຳຮ້ອງກ່ອນລ່ວງຫນ້າ.

## ແມ່ນຫຍັງຈະເກີດຂຶ້ນຫລັງຈາກທີ່ຂ້ອຍສົ່ງຄຳຮ້ອງຂອງຂ້ອຍເຂົ້າໄປແລ້ວ?



ຖ້າຫາກວ່າທ່ານຮ້ອງຂໍເອົາທາງອອນລາຍນ໌ ຫລືສົ່ງມາທາງໄປສະນີ,ທ່ານຈະມີການສຳພາດ ເພື່ອຈະຮັບປະກັນວ່າພວກເຮົາເຂົ້າໃຈຣາຍລະອຽດຢູ່ໃນໃບຄຳຮ້ອງ.ການສຳພາດ ຈະເກີດຂື້ນທາງໂທຣະສັບຫລືຢູ່ຕາມ ຫ້ອງການບໍຣິການຊຸມນຸມຊົນ DSHS ທ້ອງຖິ່ນຂອງທ່ານ.ຖ້າຫາກວ່າທ່ານ ຮ້ອງຂໍເອົາຢູ່ຕາມຫ້ອງການບໍຣິການຊຸມ ນຸມຊົນທ້ອງຖິ່ນຂອງທ່ານຫລືໂດຍທາງ ໂທຣະສັບ 877-501-2233, ບໍ່ຈຳ ເປັນຕ້ອງໄດ້ປະກອບໃບຄຳຮ້ອງຂໍລ່ວງໜ້າ.

**ໃນຣະຫວ່າງການສຳພາດ, ພວກເຮົາຈະ:**

- ອະທິບາຍກົດຣະບຽບຂອງໂຄງການ.
- ຖາມທ່ານຄຳຖາມກ່ຽວກັບຣາຍຣະອຽດຢູ່ໃນ ຄຳຮ້ອງຂໍຂອງທ່ານ.
- ຖາມເອົາຫລັກຖານຂອງຣາຍຣະອຽດບາງຢ່າງຈາກທ່ານ.
- ເອົາໂກປີ້ຂອງໃບສິດທິ ແລະ ໜ້າທີ່ຮັບຜິດຊອບໃຫ້ທ່ານ
- ອະທິບາຍຈຸດປະສົງ, ການໃຊ້ທີ່ເຫມາະສົມ, ແລະ ການປັບໄຫມລົງໂທດຂອງການໃຊ້ໂຄງການຊ່ວຍເຫລືອອາຫານໄປໃນທາງຜິດ
- ອະທິບາຍທຸກໆຢ່າງທີ່ທ່ານບໍ່ເຂົ້າໃຈ.

ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອນຳການດຳເນີນການສຳພາດ, ຄົນໃດຄົນນຶ່ງຜູ້ທີ່ຮູ້ຈັກສະພາບການຂອງທ່ານສາມາດຮ້ອງຂໍ ແລະ ຖືກສຳພາດໃນນາມຂອງທ່ານໄດ້. ຄົນນີ້ຖືກເອີ້ນວ່າຜູ້ຕາງໜ້າທີ່ຖືກແຕ່ງຕັ້ງ.

## ຂ້ອຍຕ້ອງການຫຍັງແດ່ສຳລັບການສຳພາດ?

**ທ່ານຕ້ອງໄດ້ເອົາໃຫ້ຫລັກຖານຂອງ:**

- ບັດປະຈຳຕົວຂອງທ່ານ.
- ຣາຍໄດ້ຂອງຄອບຄົວ.
- ສະພາບການເຂົ້າເມືອງຂອງສະມາຊິກຄອບຄົວທີ່ບໍ່ແມ່ນຄົນສັນຊາດທຸກໆຄົນ, ລວມທັງຣາຍຣະອຽດກ່ຽວກັບຣາຍໄດ້ ແລະ ຊັບສິນຂອງຊະປອນເຊີຖ້າກ່ຽວນຳ.

**ພວກເຮົາຍັງຈະຂໍໃຫ້ທ່ານສິ່ງຫລັກຖານຂອງຣາຍຣະອຽດທີ່ບໍ່ແຈ່ມແຈ້ງທຸກໆຢ່າງມາໃຫ້ອີກ.**

ຫລັງຈາກການສຳພາດ, ພວກເຮົາຈະເອົາໜັງສືໃຫ້ທ່ານບິ່ງລາຍຊື່ຂອງຫລັກຖານຕ່າງໆທີ່ພວກເຮົາຍັງຕ້ອງການຢູ່. ພວກເຮົາຈະຊ່ວຍເຫລືອທ່ານຊອກເອົາຫລັກຖານຂອງສິ່ງທີ່ພວກເຮົາຕ້ອງການໃນຣະຫວ່າງການສຳພາດຂອງທ່ານ. ທ່ານຈະມີເວລາຢ່າງໜ້ອຍ 10 ວັນທີ່ຈະສິ່ງຫລັກຖານມາໃຫ້.



## ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າມີແນວໃດ ແນວນຶ່ງປ່ຽນແປງໃນສະພາບການຂອງຄອບຄົວຂອງຂ້ອຍ?

ຖ້າຫາກວ່າຄອບຄົວຂອງທ່ານໄດ້ຮັບແຕ່ອາຫານຈຳເປັນເທົ່ານັ້ນ,ທ່ານຕ້ອງໄດ້ບອກພວກເຮົາຖ້າຫາກວ່າລາຍໄດ້ຂອງຄອບຄົວທັງຫມົດຂອງທ່ານຂຶ້ນເກີນ 130% ຂອງຂອບເຂດຄວາມທຸກຍາກຂອງຣັດຖະບານກາງ.ທ່ານສາມາດບອກພວກເຮົາກ່ຽວກັບການປ່ຽນແປງໂດຍທາງຫນັງສື, ທາງໂທຣະສັບ,ໂດຍຕົນເອງ, ຫລືອອນລາຍນ໌ໄດ້ທີ່ washingtonconnection.org.

ສຳລັບການຂຽນຫນັງສືຫາ,ທີ່ຢູ່:<br>
DSHS-CSD Customer Service Center<br>
P.O. Box 11699<br>
Tacoma WA 98411-6699

ໂດຍທາງໂທຣະສັບ: 877-501-2233

ທ່ານຕ້ອງລາຍງານການປ່ຽນແປງກ່ອນວັນທີ 10th ຂອງເດືອນຕິດຕາມເດືອນທີ່ລາຍໄດ້ຂອງທ່ານຂຶ້ນ. ຕົວຢ່າງ, ຖ້າຫາກວ່າທ່ານມີການປ່ຽນແປງທີ່ໄດ້ເກີດຂຶ້ນມື້ນີ້,ທ່ານຕ້ອງລາຍງານກ່ອນວັນທີ 10th ຂອງເດືອນຕໍ່ໄປ.

| ຈຳນວນຄົນຢູ່ໃນຄອບຄົວ | ຈົ່ງລາຍງານຖ້າຫາກວ່າລາຍໄດ້ກາຍເກີນ |
|---|---|
| 1 | $1,632 |
| 2 | $2,215 |
| 3 | $2,798 |
| 4 | $3,380 |
| 5 | $3,963 |



ຖ້າຫາກວ່າຄອບຄົວຂອງທ່ານໄດ້ຮັບການຊ່ວຍເຫລືອແນວອື່ນເພີ້ມເຕີມໃສ່ອາຫານຈໍາເປັນ, ທ່ານຕ້ອງລາຍງານໂດຍອີງຕາມກົດຫມາຍ Washington Administrative Code 388-418-0005.

ທ່ານຈະຖືກບອກໂດຍທາງຫນັງສືວ່າການປ່ຽນແປງສະທ້ອນເຖິງການຊ່ວຍເຫລືອອາຫານຂອງທ່ານແນວໃດ. ຖ້າຫາກວ່າທ່ານບໍ່ເຫັນພ້ອມນໍາ, ທ່ານຈະເວົ້ານໍາພະນັກງານການຊ່ວຍເຫລືອຂອງທ່ານ,ຜູ້ຄວບຄຸມງານ ຫລື ຜູ້ປົກຄອງຫ້ອງ ການບໍຣິການຊຸມນຸມຊົນໄດ້. ຖ້າຫາກວ່າທ່ານຍັງບໍ່ເຫັນພ້ອມຢູ່, ທ່ານຈະຮ້ອງຂໍເອົາການຟັງເຣື່ອງຈາກອໍານາດການປົກຄອງໄດ້.

## ຖ້າວ່າຂ້ອຍມີເງື່ອນໄຂໄດ້ຮັບ, ເມື່ອໃດຂ້ອຍຈະ ໄດ້ຮັບການຊ່ວຍເຫລືອອາຫານຂອງຂ້ອຍ?

ເມື່ອເວລາທ່ານຮ້ອງຂໍເອົາເທື່ອທໍາອິດ, ການຊ່ວຍເຫລືອຂອງທ່ານຈະຖືກເບີກອອກໃຫ້ໃນໄວໆຫລັງຈາກທີ່ພວກເຮົາໄດ້ຮັບຣາຍຣະອຽດທຸກໆຢ່າງທີ່ພວກເຮົາຕ້ອງການເພື່ອຈະຕັດສິນວ່າທ່ານມີເງື່ອນໄຂໄດ້ຮັບ.

ວັນທີເຈາະຈົງທີ່ການຊ່ວຍເຫລືອອາຫານຂອງທ່ານຈະມີໄວ້ໃຫ້ຈະຖືກຕີພິມຢູ່ໃນໃບແຈ້ງການອະນຸມັດຂອງທ່ານ. ຫລັງຈາກທີ່ຈໍານວນຂອງການຊ່ວຍເຫລືອອາຫານຈໍາເປັນທໍາອິດຂອງທ່ານໄດ້ຖືກເບີກອອກໃຫ້ທ່ານແລ້ວ,ວັນຂອງເດືອນທີ່ທ່ານໄດ້ຮັບ ການຊ່ວຍເຫລືອອາຫານຈໍາເປັນຂອງທ່ານຈະບໍ່ປ່ຽນແປງ.

ການຊ່ວຍເຫລືອຂອງທ່ານຈະມີໄວ້ໃຫ້ໃນວັນສຸດສັບປະດາແລະ ວັນພັກບຸນ, ແລະ ການຊ່ວຍເຫລືອຕ່າງໆທີ່ທ່ານບໍ່ໄດ້ຈ່າຍເທື່ອກ່ອນທ້າຍເດືອນຈະຖືກເກັບໄວ້ຕໍ່ໄປໃສ່ເດືອນຫນ້າ.



## ຂ້ອຍຈະໄດ້ຮັບອາຫານຈຳເປັນຂອງຂ້ອຍດົນນານເທົ່າໃດ?

**ເມື່ອທ່ານມີເງື່ອນໄຂໄດ້ຮັບໂຄງການອາຫານຈຳເປັນທ່ານຈະໄດ້ຮັບ ໜັງສືຈາກພວກເຮົາທີ່ຈະບອກທ່ານວ່າ:**

- ທ່ານມີເງື່ອນໄຂໄດ້ຮັບ ຫລື ບໍ່.
- ຈຳນວນເດືອນທັງໝົດຢູ່ໃນຣະຍະເວລາອະນຸມັດຂອງທ່ານ.
- ຈຳນວນຂອງການຊ່ວຍເຫລືອອາຫານທີ່ທ່ານຈະໄດ້ຮັບ.

ເຄິ່ງທາງຕະລອດຣະຍະອະນຸມັດຂອງທ່ານ (ຫົກເດືອນສຳລັບຄອບຄົວສ່ວນຫລາຍ) ທ່ານຈະໄດ້ຮັບໃບທວນຄືນເບິ່ງກາງການອະນຸມັດເພື່ອຈະຂຽນປະກອບ.ພວກເຮົາໃຊ້ໃບລາຍງານເພື່ອຈະດັດ ແປງແກ້ໄຂຣາຍຣະອຽດກ່ຽວກັບທ່ານ, ຄົນຢູ່ໃນເຮືອນຂອງທ່ານ, ຣາຍໄດ້ຂອງຄອບຄົວຂອງທ່ານ, ແລະ ຣາຍຈ່າຍບາງຢ່າງ.ອັນນີ້ແມ່ນເພື່ອຈະໃຫ້ແນ່ວ່າທ່ານໄດ້ຮັບຈຳນວນການຊ່ວຍເຫລືອທີ່ຖືກຕ້ອງ. ທ່ານຍັງສາມາດເຮັດການທວນຄືນໃຫ້ແລ້ວທາງໂທຣະສັບ.

ປະມານ 45 ວັນກ່ອນທີ່ອາຫານຈຳເປັນຂອງທ່ານໄດ້ຖືກຕັ້ງໄວ້ໃຫ້ໝົດກຳນົດທ່ານຈະໄດ້ຮັບໃບແຈ້ງການພ້ອມທັງໃບຟອມທວນຄືນເບິ່ງເງື່ອນໄຂຮັບການຊ່ວຍເຫລືອເພື່ອຈະຂຽນປະກອບຖ້າຫາກວ່າທ່ານຍັງຕ້ອງການຢາກໄດ້ການຊ່ວຍເຫລືອອາຫານຢູ່ຕໍ່ໄປ.

**ຂຽນປະກອບແລະສົ່ງກັບຄືນມາໃບຟອມທວນຄືນເບິ່ງເງື່ອນໄຂຮັບເອົາການຊ່ວຍເຫລືອໄປທີ່:**

DSHS Customer Service Center
P.O. Box 11699
Tacoma, WA 98411-6699

ພວກເຮົາຈະສົ່ງໜັງສືໄປໃຫ້ທ່ານເພື່ອຈະມີການສຳພາດທາງໂທຣະສັບຫລື ຢູ່ຫ້ອງການບໍຣິການຊຸມນຸມຊົນ DSHS ທ້ອງຖິ່ນຂອງທ່ານ. ທ່ານຕ້ອງເຮັດການສຳພາດອັນນີ້ໃຫ້ແລ້ວເພື່ອຈະຮູ້ຈັກວ່າທ່ານມີເງື່ອນໄຂທີ່ຈະໄດ້ຮັບການຊ່ວຍເຫລືອອາຫານຕື່ມ ຫລື ບໍ່.



## ກົມມີນະໂຍບາຍການບໍ່ແບ່ງແຍກຊົນຊັ້ນວັນນະບໍ່?

ໂດຍອີງຕາມກົດໝາຍພົລເມືອງຂອງຣັດຖະບານກາງແລະກຳນົດກົດເກນ ແລະ ນະໂຍບາຍຂອງກະຊວງກະສິກັມຂອງ U.S., ສະຖາບັນບ່ອນນີ້ໄດ້ຖືກຫວງຫ້າມບໍ່ໃຫ້ມີການແບ່ງແຍກຊົນຊັ້ນວັນນະ ໂດຍອີງຕາມພື້ນຖານຂອງຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ,ເພດ (ລວມທັງເອກລັກທາງເພດແລະການອຸ່ນອ່ຽງທາງ ເພດ) , ສາສະນາ,ລັດທິ, ຄວາມເສັຽອົງຄະ,ອາຍຸ, ຄວາມເຊື່ອຖືດ້ານການເມືອງ,ຫລືການຕອບໂຕ້ ຫລືການແກ້ແຄ້ນສຳລັບການເຄື່ອນໄຫວທາງດ້ານການເມືອງແຕ່ກ່ອນ.

ຣາຍຣະອຽດຂອງໂຄງການອາດຈະມີໄວ້ໃຫ້ເປັນພາສາອື່ນນອກຈາກພາສາອັງກິດ.ບຸກຄົນທີ່ມີຄວາມເສັຽອົງຄະຜູ້ທີ່ຕ້ອງການຫົນທາງແບບອື່ນຂອງການຕິດຕໍ່ສື່ສານເພື່ອຈະໄດ້ຣາຍຣະອຽດກ່ຽວກັບໂຄງການ (ເຊັ່ນວ່າ ໜັງສືຄົນຕາບອດ, ໜັງສືພິມໃຫຍ່,ເທັບສຽງ,ພາສາອະເມຣິກັນໃບ້) ,ຄວນຈະຕິດຕໍ່ຫາຫ້ອງການ (ຣັດຫລືທ້ອງ ຖິ່ນ) ບ່ອນທີ່ເຂົາເຈົ້າຣ້ອງຂໍເອົາການຊ່ວຍເຫລືອ. ບຸກຄົນຜູ້ທີ່ຫູໜວກ,ຍາກຕໍ່ການຟັງສຽງຫລືມີຄວາມເສັຽອົງຄະດ້ານການປາກເວົ້າຈະຕິດຕໍ່ຫາ USDA ໄດ້ໂດຍຜ່ານ Federal Relay Service ໄດ້ທີ່ (800) 877-8339.

ເພື່ອຈະຍື່ນຄຳຮ້ອງທຸກກ່ຽວກັບການແບ່ງແຍກຊົນຊັ້ນວັນນະໃສ່ໂຄງການ, ຜູ້ຮ້ອງທຸກຄວນຈະຂຽນປະກອບໃບຟອມ Form AD-3027, USDA Program Discrimination Complaint ຊຶ່ງສາມາດຖືກເອົາມາໄດ້ທາງ ອອນລາຍນ໌ຈາກ https://www.usda.gov/sites/default/files/documents/ad-3027.pdf ,ຫ້ອງການ USDA ທຸກໆບ່ອນ, ໂດຍການໂທຫາ (833) 620-1071, ຫລືໂດຍການຂຽນໜັງສືສົ່ງໄປຫາ USDA. ໜັງສືຕ້ອງມີຊື່ຂອງຜູ້ຮ້ອງທຸກ,ທີ່ຢູ່,ເລກໂທຣະສັບ,ແລະການບັນຣະຍາຍການກະທຳແບບແບ່ງແຍກຊົນຊັ້ນວັນນະທີ່ຖືກກ່າວຫາເປັນຣາຍຣະອຽດພຽງພໍເພື່ອຈະແຈ້ງບອກ Assistant Secretary for Civil Rights (ASCR) ກ່ຽວກັບສະພາບການ ແລະວັນທີ ຂອງການລ່ວງລະເມີດສິດທິພົລເມືອງທີ່ຖືກກ່າວຫາ.
ໃບຟອມ AD-3027 ທີ່ຖືກຂຽນ ປະກອບແລ້ວຫລືໜັງສືຕ້ອງຖືກສົ່ງໄປຫາ:

Food and Nutrition Service, USDA
1320 Braddock Place, Room 334
Alexandria, VA 22314; ຫລື
ແຟກຊ໌: (833) 256-1665 ຫລື (202) 690-7442; ຫລື
ອີແມລ໌: FNSCIVILRIGHTSCOMPLAINTS@usda.gov

ສະຖາບັນແຫ່ງນີ້ເປັນຜູ້ໃຫ້ການບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.

## ບັດ Washington QUEST EBT ແມ່ນຫຍັງ?

ລະບົບການໂອນການຊ່ວຍເຫລືອທາງອີເລກໂຕຣນິກແມ່ນປອດພັຍ,ສະດວກ, ແລະເປັນທາງງ່າຍສຳລັບທ່ານເພື່ອຈະຮັບເອົາການຊ່ວຍ ເຫລືອ ອາຫານຂອງທ່ານແຕ່ລະເດືອນ.

- ທ່ານຕ້ອງໃຊ້ບັດ EBT ເພື່ອຈະເອົາການຊ່ວຍ ເຫລືອຂອງທ່ານ.
- ບັດ EBT ຈະທຳງານຄ້າຍຄືກັນກັບບັດ ATM, ແຕ່ວ່າການຊ່ວຍເຫລືອ ອາຫານໃນນັ້ນສາມາດຖືກ ໃຊ້ໄດ້ເພື່ອຈະຊື້ເອົາອາຫານເທົ່ານັ້ນ.
- ການຊ່ວຍເຫລືອຂອງທ່ານ ຈະຖືກເອົາໃສ່ໃນບັນຊີທີ່ ຖືກຕັ້ງໄວ້ແລ້ວ.
- ການຊ່ວຍເຫລືອຂອງ ທ່ານສາມາດໃຊ້ໄດ້ນຳ ເລກປະຈຳຕົວລັບຂອງ ທ່ານເທົ່ານັ້ນ.




## EBT PIN ແມ່ນຫຍັງ?

ທຸກໆເທື່ອທີ່ທ່ານໃຊ້ບັດ ຂອງທ່ານ, ທ່ານຕ້ອງຕີເລກລັບສີ່ຕົວເຂົ້າ. ເລກເຫລົ່ານີ້ຖືກເອີ້ນວ່າ PIN ເລກປະຈຳຕົວສ່ວນຕົວ.

**** = PIN (4 ເລກເປັນຄວາມລັບ)

**ອັນນີ້ແມ່ນຫົນທາງທີ່ຈະໄດ້ເລກ PIN:**

- ຖ້າຫາກວ່າທ່ານໄດ້ບັດຂອງທ່ານຢູ່ຫ້ອງການ DSHS ທ້ອງຖິ່ນຂອງທ່ານ. ທ່ານຈະເລືອກເອົາເລກ PIN ຂອງທ່ານໃນເວລານັ້ນ.
- ຖ້າຫາກວ່າບັດໄດ້ຖືກສົ່ງໄປໃຫ້ທ່ານໂດຍທາງໄປສະນີ-ທ່ານຕ້ອງໂທຫາ ພະແນກປະຊາສັມພັນເພື່ອຈະເລືອກເອົາເລກ PIN ໃຫມ່ ຫລືເລກ PIN ແທນຂອງທ່ານ.

ທ່ານຕ້ອງການເລກສີ່ຕົວອັນນີ້ ແລະ ບັດຂອງທ່ານເພື່ອຈະເອົາການ ຊ່ວຍເຫລືອຂອງທ່ານ.

ຢ່າສູ່ຂຽນເລກ PIN ຂອງທ່ານໃສ່ບັດຂອງທ່ານ ແລະ ຢ່າສູ່ເວົ້າ ເລກ PIN ຂອງທ່ານໃຫ້ຄົນອື່ນຟັງຜູ້ທີ່ບໍ່ໄດ້ຢູ່ໃນຄອບຄົວຂອງທ່ານ! ເກັບ ຮັກສາເອົາເລກ PIN ຂອງທ່ານໄວ້ບ່ອນປອດພັຍ ແລະ ບໍ່ແມ່ນກະ ເປົາ ອັນດຽວກັນກັບບັດຂອງທ່ານ.

ຖ້າຫາກວ່າທ່ານເສັຽບັດຂອງທ່ານ ຫລື ມັນເສັຽຫາຍ, ເລກ PIN ຍັງຄືຢູ່ຄືເກົ່າ. ບັດແທນໃຫມ່ຈະມີເລກ PIN ອັນດຽວກັນ. ເລກPIN ຈະບໍ່ປ່ຽນແປງນອກຈາກທ່ານຮ້ອງຂໍໃຫ້ປ່ຽນ.

## ຜູ້ຖືບັດສຳຮອງແມ່ນຫຍັງ?

ທ່ານຈະເລືອກເອົາຄົນໃດຄົນນຶ່ງອີກກໍໄດ້ເພື່ອຈະຊ່ວຍທ່ານໃຊ້ການຊ່ວຍເ ຫລືອຂອງທ່ານ. ບຸກຄົນນີ້ຖືກເອີ້ນວ່າຜູ້ຖືບັດສຳຮອງ.

**ຜູ້ຖືບັດສຳຮອງ**

- ໄດ້ຖືກເລືອກເອົາໂດຍທ່ານ.
- ຈະໄດ້ຮັບບັດ Washington QUEST ຂອງເອົາເຈົ້າເອງ ແລະ ເລກ PIN ຢູ່ຕາມຫ້ອງການ DSHS ທ້ອງຖິ່ນ
- ຈະສາມາດໃຊ້ຈ່າຍການຊ່ວຍເຫລືອຂອງທ່ານ.

ຖ້າຫາກວ່າທ່ານເລືອກຄົນໃດຄົນນຶ່ງໃຫ້ເປັນຜູ້ຖືບັດສຳຮອງຂອງທ່ານ, ໃຫ້ ເລືອກເອົາຄົນທີ່ທ່ານເຊື່ອໃຈ. ຈື່ໄວ້ວ່າ, ການຊ່ວຍເຫລືອທີ່ຖືກເສັຽໄປ ຫລື ຂີ້ລັກໄປຈະບໍ່ຖືກເຮັດແທນໃຫ້.ເພື່ອ ລາຍລະອຽດເພີ້ມເຕີມ ຫລື ເພື່ອຈະເອົາໃບຟອມອະນຸຍາດ, ໂທຫາ 1-877-501-2233.

## ລາຍລະອຽດການຕິດຕໍ່ຫາຜະແນກປະຊາສັມພັນຂອງ EBT

**ໂທຫາ 24 ຊົ່ວໂມງຕໍ່ວັນ, ເຈັດວັນຕໍ່ອາທິດເລກໂທຟຣີເມື່ອ:**

- ທ່ານປາກຮູ້ຈັກເງິນຍັງເຫລືອຢູ່ໃນບັນຊີອາຫານ ຫລື ເງິນສົດຂອງທ່ານ.
- ບັດຂອງທ່ານເສັຽໄປ, ຂີ້ລັກໄປ, ຫລື ເສັຽຫາຍໃຊ້ບໍ່ໄດ້.
- ທ່ານປາກຟັງການຖອນ 10 ເທື່ອສຸດທ້າຍຫມູ່ສຳລັບບັນຊີເງິນສົດ ຫລື ອາຫານຂອງທ່ານ.
- ທ່ານປາກໄດ້ບັດໃຫມ່ແທນ ຫລື ເລກ PIN ທາງໄປສະນີ.

## ເມື່ອໃດຂ້ອຍຄວນຈະໂທໄປຫາຜະແນກປະຊາສັມພັນຂອງ EBT?

ຜະແນກປະຊາສັມພັນຂອງ EBT
888-328-9271

ເລກສາຍຕໍ່ຂອງຣັດ TTY
800-833-8388

ເລກສາຍຕໍ່ຂອງຣັດສຳລັບຄົນຕາບອດ Braille TTY
800-833-6385

**ຜູ້ຕາງຫນ້າຂອງພະແນກປະຊາສັມພັນຍັງສາ ມາດຊ່ວຍທ່ານໄດ້ອີກຄືກັນ:**

- ຊອກຫາບ່ອນໄກ້ຄຽງບ່ອນທີ່ທ່ານສາມາດໃຊ້ບັດຂອງທ່ານ.
- ຂໍເອົາປະວັດສອງເດືອນຂອງການຖອນຂອງທ່ານ.
- ລາຍງານບັນຫານໍາຈັກ ATMs.
- ຖ້າຫາກວ່າທ່ານປາກພາສາອື່ນນອກຈາກພາສາອັງກິດ.

## ແມ່ນຫຍັງແດ່ທີ່ຂ້ອຍສາມາດເຮັດໄດ້ ແລະ ບໍ່ສາມາດເຮັດໄດ້ນໍາບັດ EBT ຂອງຂ້ອຍ ແລະ ການ ຊ່ວຍເຫລືອຂອງຂ້ອຍ?

ການໃຊ້ບັດ Washington QUEST ຂອງທ່ານໄປໃນທາງຜິດເປັນໂທດອາສຍາກັມຂອງຣັດ ແລະ ຣັດຖະບານກາງ!

### ການໃຊ້ທີ່ເຫມາະສົມ

ທ່ານ ຫລື ສະມາຊິກຂອງຄອບຄົວທ່ານຈະໃຊ້ການຊ່ວຍເຫລືອອາຫານພື້ນຖານຂອງທ່ານເພື່ອຈະຊື້ເອົາສິ່ງທີ່ເປັນອາຫານເຊັ່ນວ່າ:

- ເຂົ້າຈີ່ ແລະ ເຊຣີໂອ.
- ຫມາກໄມ້ ແລະ ຜັກ.
- ເນີຍ, ນໍ້ານົມ, ແລະ ຜະລິດທະພັນເປັນນໍ້ານົມຢ່າງອື່ນ.
- ຊີ້ນ, ປາ, ເປັດໄກ່, ແລະ ໄຂ່.
- ອາຫານຢ່າງອື່ນສ່ວນຫລາຍທີ່ບໍ່ໄດ້ຖືກຂາຍໃຫ້ເປັນອາຫານເຮັດຮ້ອນໆ
- ແກ່ນພືດ ແລະ ເຄື່ອງປູກຝັງທີ່ຜະລິດອາຫານ.

### ການໃຊ້ຜິດກົດຫມາຍ

ມັນບໍ່ຖືກຕາມກົດຫມາຍທີ່ຈະ:

- ໃຊ້ການຊ່ວຍເຫລືອອາຫານຢູ່ໃນບັດ EBT ຂອງທ່ານສໍາລັບຈຸດປະສົງແນວໃດແນວນຶ່ງນອກຈາກເພື່ອຈະຊື້ອາຫານສໍາລັບສະມາຊິກຄອບຄົວຜູ້ທີ່ ມີເງື່ອນໄຂໄດ້ຮັບ.
- ແລກປ່ຽນການຊ່ວຍເຫລືອອາຫານຂອງທ່ານສໍາລັບແນວໃດກໍຕາມທີ່ມີຄຸນຄ່າ (ການຄ້າຜິດ ກົດຫມາຍ) .ຕົວຢ່າງຂອງການຄ້າຜິດກົດຫມາຍລວມເອົາການແລກປ່ຽນການຊ່ວຍເຫລືອອາຫານສໍາລັບເງິນສົດ ຫລືແນວໃດແນວນຶ່ງນອກຈາກຊື້ເອົາອາຫານຈາກຮ້ານຄ້າທີ່ຖືກອະນຸຍາດ.
- ເອົາການຊ່ວຍເຫລືອຂອງທ່ານໃຫ້ຄົນໃດຄົນນຶ່ງຜູ້ທີ່ບໍ່ຢູ່ໃນຄອບຄົວອາຫານຈໍາເປັນຂອງທ່ານ.
- ໃຊ້ການຊ່ວຍເຫລືອອາຫານຈໍາເປັນເພື່ອຈະຊື້ເອົາສິ່ງທີ່ບໍ່ແມ່ນອາຫານເຊັ່ນວ່າເຄື່ອງໃຊ້ໃນ ເຮືອນ, ໄວຕາມິນ, ຢາ, ອາຫານສັດລ້ຽງ, ຢາສູບ,ຫລືເຫລົ້າ.

**ການປັບໄຫມລົງໂທດສຳລັບການໃຊ້ຜິດກົດຫມາຍ. ທ່ານອາດຈະຖືກ:**

- ຫມົດສິດ ແລະ ສູນເສັຽການຊ່ວຍເຫລືອຂອງທ່ານເປັນເວລາຢ່າງຫນ້ອຍນຶ່ງປີ ແລະ ຮອດ ຕະລອດຊີວິດ. ການຫມົດສິດຈະດຳເນີນຕໍ່ໄປເຖິງແມ່ນວ່າທ່ານຈະຍ້າຍໄປຣັດອື່ນ ກໍຕາມ.
- ຈະຖືກປັບໄຫມ.
- ຖືກດຳເນີນການຕາມກົດຫມາຍ, ລວມທັງການຕັດສິນລົງໂທດໃນຖານະອາດຍາ. ກົມ DSHS ຈະຮ່ວມມືນຳເຈົ້າຫນ້າທີ່ນຳຂຶ້ນສານຂອງຣັດ, ທ້ອງຖິ່ນ, ແລະ ຣັດຖະບານກາງເພື່ອຈະຕັດສິນລົງໂທດການຄ້າຜິດກົດຫມາຍໃນການຊ່ວຍເຫລືອອາຫານຈຳເປັນ ຫລື SNAP.

## ໃຊ້ການຊ່ວຍເຫລືອຂອງທ່ານທັນຕາມເວລາ

ການຊ່ວຍເຫລືອອາຫານຂອງທ່ານມີຈຸດປະສົງເພື່ອຈະຕອບສະນອງຄວາມຕ້ອງການປັດຈຸບັນຂອງຄອບຄົວຂອງທ່ານ.

ພວກເຮົາຈະຍົກເລີກການຊ່ວຍເຫລືອອາຫານຈຳເປັນຖ້າຫາກວ່າທ່ານບໍ່ໃຊ້ຈັກດອນລາ ພາຍໃນ 274 ວັນ.



ຄ: ທ່ານສາມາດໃຊ້ບັດ EBT ຂອງທ່ານຢູ່ນອກຣັດໄດ້ບໍ່?

ຕ: ບັດ Washington QUEST ຈະຖືກຮັບເອົາທົ່ວປະເທດ ຕາມຮ້ານຄ້າທີ່ເຂົ້າຮ່ວມນຳໃນໂຄງການ EBT. ຫລຽວຫາປ້າຍ QUEST ຫລື ຖາມຮ້ານຄ້າເບິ່ງກ່ອນຈະພະຍາຍາມໃຊ້ບັດ QUEST ຂອງທ່ານ. ຮ້ານຄ້າທີ່ຂາຍອາຫານອາດຈະຫລື ອາດຈະບໍ່ເຂົ້າຮ່ວມເປັນຜູ້ເອົາການຊ່ວຍເຫລືອເງິນໃຫ້.

ຄ: ທ່ານສາມາດສົ່ງຄືນສິ່ງທີ່ຊື້ເອົາດ້ວຍບັດຂອງທ່ານໄດ້ ຫລື ບໍ່?

ຕ: ໄດ້. ຕົວຢ່າງວ່າ: ຖ້ານ້ຳນົມທີ່ທ່ານຫາກໍຊື້ເອົານັ້ນບູດເຫມົ່າ, ທ່ານສາມາດນຳເອົານົມບູດ ແລະ ໃບຮັບກັບຄືນໄປຫາຮ້ານຄ້າ. ບັນຊີອາຫານຂອງທ່ານຈະຖືກສົ່ງເງິນຄືນໃຫ້ສຳລັບການສົ່ງຄືນ. ທ່ານຈະບໍ່ໄດ້ຮັບເງິນສົດສຳລັບການສົ່ງຄືນຖ້າຫາກວ່າສິ່ງນັ້ນ ໄດ້ຖືກຊື້ເອົາໂດຍການໃຊ້ການຊ່ວຍເຫລືອອາຫານຂອງທ່ານ.

ຄ: ຂ້ອຍສາມາດເອົາເງິນສົດຄືນຈາກການຊ່ວຍເຫລືອອາຫານໃນບັດ EBT ຂອງຂ້ອຍໄດ້ບໍ່?

ຕ: ບໍ່ໄດ້. ການຊ່ວຍເຫລືອອາຫານທຸກໆຢ່າງທີ່ທ່ານບໍ່ໄດ້ໃຊ້ໃນທ້າຍເດືອນຈະມີໄວ້ໃຫ້ໃນເດືອນຫນ້າ.

ຄ: ຖ້າຫາກວ່າຂ້ອຍຍ້າຍອອກຈາກຣັດ, ຂ້ອຍສາ ມາດໄດ້ຮັບອາຫານຈຳເປັນຕໍ່ໄປຢູ່ບໍ່?

ຕ: Basic Food ແມ່ນຊື່ຂອງການຊ່ວຍເຫລືອ SNAP ຢູ່ໃນຣັດວໍຊິງຕັນ. ທ່ານຈະຕ້ອງໄດ້ໂທຫາ ສູນກາງປະຊາສັມພັນໄດ້ທີ່ເລກ 1-877-501-2233 ເພື່ອຈະປິດສຳນວນເອກສານຂອງທ່ານເພື່ອວ່າທ່ານຈະສາມາດ ຂໍເອົາໂຄງກາ SNAP ຢູ່ໃນຣັດບ່ອນທີ່ທ່ານອາສັຍຢູ່. ທ່ານຍັງສາມາດໃຊ້ການຊ່ວຍເຫລືອທີ່ຖືກເບີກອອກ ໃສ່ບັດ EBT ຂອງທ່ານໃນເວລາທີ່ທ່ານອາສັຍຢູ່ໃນຣັດວໍຊິງຕັນ.

ສະຖາບັນແຫ່ງນີ້ເປັນຜູ້ໃຫ້ການບໍລິການ ທີ່ໃຫ້ໂອກາດເທົ່າທຽມ ກັນ.

Take a Fresh Look

Basic Food

DSHS 22-297 LA (Rev. 10/24) Laotian